Where The Forests Have No Words

Words by: **Jeetendra Marcelline**
Photos by: **Souksamlan Laladeth**

Deep in the remotest reaches of northern Laos, where roads give way to trails and trails give way to nowhere, a young man from a Khmu village near the Nam Kan Protected Area spent more than a decade learning a language that has no words. In early October, in Vientiane, that language finally found its form — Souksamlan "Toun" Laladeth launched his debut nature photography publication, Where The Forests Have No Words, an anthology of rare and beautiful experiences drawn from Laos' unique natural heritage.

Toun's life is a tale of accidents, awareness, exploration, and discovery. A son of the soil, he did not attend formal training, and all he knows today of composition, light, and the patient choreography of tracking wildlife through dense cover, he taught himself by doing, and by borrowing equipment and techniques from managers and colleagues along the way. His first opportunity came as a guide at the Gibbon Experience, granting him access to the Nam Kan National Protected Area and, with it, the forest canopy that would become his lifelong classroom.

"I see with my ears," Toun says, describing the tracking instincts that have carried him over a decade of expeditions into the far-flung regions of the land. A simple phrase yet speaks volumes — the relentless pursuit and patience of a person willing to wait in the undergrowth for a fleeting moment that may never be, and the conviction, hard-won, that nature reveals itself only to those who are still enough to notice.



Moon River, Annamites

Champa Meuanglao



1



2

During the pandemic, Toun joined Lanjan Holdings, which sponsored him through a sequence of qualifications, notably a conservation certification from Leeds University, the National Geographic photography masterclass, and participation in the IUCN World Conservation Congress, held in France. This complements his previous honors: the Narrator Award at the 2020 Art of Light Lao Contemporary Photo Contest, and the Special Award for his film "Roots" at American Film Week in Luang Prabang in 2014.

Today, Toun serves as a nature photographer and media professional for the Saola Foundation and the World Wildlife Fund, while also managing Natures Sanctuary at Lanjan. Across all three roles, one conviction remains constant. "Knowledgeable and clear communication are critical for conservation education and encouraging good behavior," Toun believes, and to him, the visual language of photography and videography is among the most persuasive tools available for showcasing science, biodiversity, and the many challenges conservation faces.

It is an increasingly needed vernacular. Rising consumerism, tourism, and population growth, together with easier access to goods and services than any previous Lao generation has known, are placing enormous pressure on natural resources across the nation. "In a rapidly changing Laos, a country embracing the information and consumer age, visuals and sounds present stark realities and provoke debate at many levels," Toun observes. "I believe that humans are an integral part of nature, and our survival demands coexistence. It is important to find a balance between needs and wants, and a balance between the demands of modern life and protecting the environment."

Where the Forests Have No Words is designed as much as a technical reference for the nature lover, adventurer, academic, and researcher as it is a showcase for the casual reader, detailing both the effort and the technique behind each point of capture. Its purpose, in Toun's own telling, is larger still: to inspire the entire Lao family, and the visitors to Laos, to join hands in protecting the country's living natural heritage, and in doing so, to build a strong and lasting environmental contract.



3



4

1: Black Cheeked/Crested Gibbon, Nam Kan
2: Frog, Annamites
3: Fungi, Natures Sanctuary
4: Toun out in the field

For purchases and other information, contact: souksamlan@lanjanholdings.com

Early reviews of the book are positive. One declaring that "with his first publication, Toun has both opened a window and provided a mirror to the soul of this magical land."

To encourage greater protection of Laos' wild places, Toun advocates for expanded funding and institutional support for community-based conservation programs that provide livelihoods and careers in conservation, easier pathways for young Lao people from remote provinces to access training and certification in conservation media, and stronger legal protections for the protected areas, without which books such as his would never be published. At a time of rapid change, he hopes his work, and the footprint it leaves behind, will inspire others to protect what remains.

ປຶ້ມຮູບພາບ

“Where The Forests Have No Words”

ບົດໂດຍ: **Jeetendra Marcelline**
ຮູບໂດຍ: **ສຸກສຳລານ ລາລາເດດ**
ແປ ແລະ ຮຽບຮຽງໂດຍ: **ໄພບູນ ທະນະບົວສີ**

ໃນດິນແດນອັນຫ່າງໄກສອກຫຼີກທີ່ສຸດທາງພາກເໜືອຂອງລາວ ບ່ອນເຊິ່ງຖະໜົນຫົນທາງຄ່ອຍໆປ່ຽນເປັນເສັ້ນທາງຍ່າງ ແລະແລ້ວເສັ້ນທາງຍ່າງດັ່ງກ່າວກໍຄ່ອຍໆເລືອນຫາຍໄປທ່າມກາງປ່າດົງພົງໄພ, ທີ່ແຫ່ງນັ້ນມີຊາຍໜຸ່ມຄົນໜຶ່ງມາຈາກບ້ານຊົນເຜົ່າຫົ້ມມຸ ເຊິ່ງຕັ້ງຢູ່ໃກ້ເຂດປ່າສະຫງວນແຫ່ງຊາດນໍ້າທ່ານ ໄດ້ໃຊ້ເວລາກວ່າທົດສະວັດເພື່ອສຶກສາຮຽນຮູ້ພາສາທີ່ໄຮ້ຖ້ອຍຄຳ.ແລະໃນຊ່ວງຕົ້ນເດືອນຕຸລາ ທີ່ນະຄອນຫຼວງວຽງຈັນ, ພາສາດັ່ງກ່າວກໍຖືກຖ່າຍທອດອອກມາເປັນຮູບປະທຳ ຜ່ານຜົນງານຮູບຖ່າຍເຫຼັ້ມທຳອິດຂອງຊາຍໜຸ່ມໃນນາມ ສຸກສຳລານ ລາລາເດດ (ຕຸ່ມ) ເຊິ່ງໄດ້ເປີດໂຕປຶ້ມຮູບພາບເຫຼັ້ມທຳອິດ ພາຍໃຕ້ຊື່ “Where The Forests Have No Words,” ເຊິ່ງເປັນຜົນງານທີ່ເກັບຮວບຮວມປະສົບການອັນງົດງາມ ແລະ ຫາຊົມໄດ້ຍາກຈາກພື້ນທີ່ປ່າໄມ້ໂດຍຖ່າຍທອດມໍລະດົກທາງທຳມະຊາດອັນໂດດເດັ່ນທີ່ເປັນເອກະລັກຂອງລາວ.

ຊ້າຍ: Ashy Drongo, ອຸທະຍານແຫ່ງຊາດນໍ້າທ່ານ
1-2: ຮູບໜ້າປົກ

ເລື່ອງລາວຊີວິດຂອງຕຸ່ນ ປຽບເໝືອນການເດີນທາງທີ່ເກີດຈາກເຫດບັງເອີນ, ລວມທັ້ງການຮຽນຮູ້, ການອອກສຳຫຼວດ ແລະ ການຄົ້ນພົບ. ຕຸ່ນເຕີບໃຫຍ່ຈາກຜືນດິນ ແລະ ຊຸມຊົນທ້ອງຖິ່ນ ໂດຍບໍ່ໄດ້ຜ່ານການຝຶກຝົນດ້ານການຖ່າຍພາບຢ່າງເປັນທາງການ, ແຕ່ວ່າຄວາມຮູ້ກ່ຽວກັບການຈັດອົງປະກອບພາບ, ແສງ ຕະຫຼອດຮອດສິລະປະຂອງການຕິດຕາມສັດປ່າທ່າມກາງປ່າໄມ້ອັນຕຶບໜາ ລ້ວນສະສົມມາຈາກການລົງມືປະຕິບັດຕົວຈິງທ່າມກາງການສຶກສາຮຽນຮູ້ດ້ວຍຕົນເອງ ບວກກັບອາໄສການແລກປ່ຽນປະສົບການ, ການຂໍຢືມອຸປະກອນ ແລະ ການຮຽນຮູ້ເຕັກນິກຈາກຫົວໜ້າ ແລະ ເພື່ອນຮ່ວມງານທີ່ປະສົບພົບພໍ້ກັນໃນລະຫວ່າງເສັ້ນທາງເດີນຂອງຊີວິດ. ໂອກາດສຳຄັນຄັ້ງທຳອິດມາຮອດ ເມື່ອລາວເລີ່ມເຮັດວຽກເປັນພະນັກງານນຳທ່ຽວທີ່ “Gibbon Experience”, ເຊິ່ງປຽບເໝືອນປະຕູເປີດຮັບໃຫ້ມີໂອກາດເຂົ້າໄປສຳຜັດປ່າໄມ້ໃນເຂດປ່າສະຫງວນແຫ່ງຊາດນໍ້າທ່ານຢ່າງໃກ້ຊິດ ລວມທັ້ງເຮືອນຍອດໄມ້ໃນປ່າໃຫຍ່ ທີ່ກາຍມາເປັນທ້ອງຮຽນແຫ່ງຊີວິດຂອງລາວໃນເວລາຕໍ່ມາ.

1 ▸



2 ▸



"ຂ້າພະເຈົ້າເບິ່ງດ້ວຍໜູ," ຕຸ້ນກ່າວ ເມື່ອເວົ້າເຖິງສັນຊາດຕະຍານໃນການຕິດຕາມສັດປ່າທີ່ນຳພາລາວອອກເດີນທາງສຳຫຼວດໃນພື້ນທີ່ຫ່າງໄກສອກຫຼີກທົ່ວປະເທດຕະຫຼອດເວລາກວ່າທົດສະວັດ. ຄຳເວົ້າດັ່ງກ່າວເຖິງຈະເປັນປະໂຫຍກສັ້ນໆ ແຕ່ກໍສະທ້ອນໃຫ້ເຫັນຄວາມໝາຍໄດ້ຢ່າງເລິກເຊິ່ງໂດຍສະເພາະກໍແມ່ນຄວາມມຸ່ງໝັ້ນ, ຄວາມອົດທົນ ແລະ ຄວາມລະອຽດອ່ອນຂອງຊາຍຜູ້ພ້ອມເຝົ້າລໍຄອຍທ່າມກາງປ່າດົງພົງໄພເພື່ອຊ່ວງເວລາອັນສັ້ນທີ່ອາດບໍ່ມີວັນເກີດຂຶ້ນ ແລະ ສະທ້ອນເຖິງຄວາມເຊື່ອໝັ້ນທີ່ສະສົມມາຈາກປະສົບການອັນຍາວນານວ່າ ທຳມະຊາດຈະເຜີຍຕົວຕົນໃຫ້ເຫັນສະເພາະກັບຜູ້ທີ່ຮູ້ຈັກສະຫງົບນິ້ງ ແລະ ລໍຄອຍເຝົ້າຟັງດົນສົມຄວນທີ່ຈະສ້າງເກດເຫັນມັນເທົ່ານັ້ນ.

ໃນຊ່ວງການແຜ່ລະບາດຂອງພະຍາດໂຄວິດ-19, ຕຸ້ນໄດ້ເຮັດວຽກຮ່ວມກັບ Lanjan Holdings, ເຊິ່ງໃຫ້ການສະໜັບສະໜູນໃນການພັດທະນາຄວາມຮູ້ແລະ ທັກສະຜ່ານຫຼັກສູດວິຊາຊີບຢ່າງຕໍ່ເນື່ອງ ສິ່ງທີ່ໂດດເດັ່ນກໍແມ່ນປະກາດສະນິຍະບັດດ້ານການອະນຸລັກ ຈາກມະຫາວິທະຍາໄລ Leeds, ລວມທັງການເຂົ້າຮ່ວມຫຼັກສູດລະດັບສູງດ້ານການຖ່າຍພາບຂອງສະມາຄົມ ເນຊັນແນວ ຈີໂອກຣາຟຟິກ (National Geographic) ແລະ ເຂົ້າຮ່ວມກອງປະຊຸມໃຫຍ່ສາມັດຊາການອະນຸລັກສິ່ງແວດລ້ອມໂລກ (IUCN World Conservation Congress) ເຊິ່ງຈັດຂຶ້ນທີ່ປະເທດຝຣັ່ງ. ປະສົບການເຫຼົ່ານີ້ຖືກຕໍ່ຍອດມາຈາກຜົນງານທີ່ໄດ້ຮັບກ່ອນໜ້ານີ້ ບໍ່ວ່າຈະເປັນລາງວັນຜູ້ບັນລະຍາຍ (Narrator Award) ຈາກການປະກວດຮູບພາບຮ່ວມສະໄໝຂອງລາວ ປະຈຳປີ 2020 ພາຍໃຕ້ຫົວຂໍ້ “ສີລະປະແຫ່ງແສງ”, ແລະ ລາງວັນພິເສດຈາກຮູບເງົາສັ້ນ ເລື່ອງ "Roots" ໃນງານເທສະການຮູບເງົາ American Film Week ທີ່ຫຼວງພະບາງ ປີ 2014.



1



2

1: Asian Golden Weaver, Natures Sanctuary
2: ທະເລໝອກ, ອຸທະຍານແຫ່ງຊາດນ້ຳກ່ານ

ທະນົ, ອຸທະຍານແຫ່ງຊາດນ້ຳກ່ານ

ປັດຈຸບັນ, ຕຸ່ນເຮັດວຽກໃນນາມຊ່ຽງພາບທຳມະຊາດ ແລະ ເປັນຜູ້ຊ່ຽວຊານດ້ານສື່ສານມວນຊົນໃຫ້ກັບມູນນິທິເສົາຫຼາ (Saola Foundation) ແລະອົງການກອງທຶນສັດປ່າໂລກ (World Wildlife Fund), ຄຽງຄູ່ກັບບໍລິຫານວຽກງານເຂດອະນຸລັກທຳມະຊາດ (Natures Sanctuary) ທີ່ Lanjan. ເຖິງແມ່ນຈະມີໜ້າທີ່ຮັບຜິດຊອບທັງສາມບົດບາດແຕກຕ່າງກັນ, ແຕ່ສິ່ງໜຶ່ງທີ່ເຊື່ອມໂຍງໜ້າທີ່ເຂົ້າໄວ້ນຳກັນນັ້ນກໍຄື ຄວາມເຊື່ອໝັ້ນອັນດຽວກັນ. “ການມີຄວາມຮູ້ທີ່ຖືກຕ້ອງ ແລະ ການສື່ສານທີ່ຊັດເຈນ ແມ່ນມີຄວາມສຳຄັນເປັນຢ່າງຍິ່ງຕໍ່ການໃຫ້ຄວາມຮູ້ດ້ານການອະນຸລັກ ແລະ ການຊຸກຍູ້ສົ່ງເສີມໃຫ້ຜູ້ຄົນມີພຶດຕິກຳທີ່ເໝາະສົມ”, ຕຸ່ນກ່າວ, ແລະ ສຳລັບລາວແລ້ວ ພາສາຮູບພາບທີ່ຖ່າຍທອດຜ່ານການຖ່າຍຮູບ ແລະ ວິດີໂອ ຖືເປັນໜຶ່ງໃນເຄື່ອງມືທີ່ມີອຳນາດທີ່ສຸດໃນການນຳສະເໜີເລື່ອງລາວທາງວິທະຍາສາດ, ຊີວະນານາພັນ ລວມທັງບັນຫາທ້າທາຍຫຼາຍຢ່າງທີ່ວຽກງານອະນຸລັກກຳລັງປະເຊີນ.

ສິ່ງດັ່ງກ່າວຖືເປັນຮູບແບບການສື່ສານທີ່ເພີ່ມທະວີຄວາມສຳຄັນຫຼາຍຍິ່ງຂຶ້ນໃນປັດຈຸບັນ. ດ້ວຍກະແສບໍລິໂພກນິຍົມທີ່ເພີ່ມສູງຂຶ້ນ, ການເຕີບໃຫຍ່ຂະຫຍາຍຕົວຂອງວຽກງານການທ່ອງທ່ຽວ ແລະ ການເພີ່ມຂຶ້ນຂອງຈຳນວນປະຊາກອນບວກກັບຄວາມສາມາດໃນການເຂົ້າເຖິງສິນຄ້າ ແລະ ບໍລິການທີ່ສະດວກສະບາຍກວ່າຄົນລຸ້ນກ່ອນໆໃນລາວ, ທັງໝົດນີ້ກຳລັງສ້າງແຮງກົດດັນອັນມະຫາສານຕໍ່ຊັບພະຍາກອນທຳມະຊາດໃນທົ່ວປະເທດ. "ທ່ານກຳລັງການປ່ຽນແປງຢ່າງວ່ອງໄວໃນລາວ, ເຊິ່ງເປັນປະເທດທີ່ກຳລັງກ້າວເຂົ້າສູ່ຍຸກຂໍ້ມູນຂ່າວສານ ແລະ ສັງຄົມບໍລິໂພກນິຍົມ, ຂະນະທີ່ພາບ ແລະ ສຽງຕ່າງໆກຳລັງນຳສະເໜີຄວາມເປັນຈິງອັນຊັດເຈນ ແລະ ກະຕຸ້ນໃຫ້ເກີດນິທານຖ້ຳຖຽງກັນໃນຫຼາຍໆລະດັບ”, ຕຸ່ນເປີດໃຈ ພ້ອມກ່າວຕື່ມວ່າ: “ຂ້າພະເຈົ້າເຊື່ອວ່າ ມະນຸດແມ່ນສ່ວນໜຶ່ງຂອງທຳມະຊາດໂດຍບໍ່ສາມາດແຍກອອກຈາກກັນໄດ້ ແລະ ການຢູ່ລອດຂອງພວກເຮົາລ້ວນແຕ່ຂຶ້ນຢູ່ກັບການຢູ່ຮ່ວມກັນຢ່າງສົມດຸນ. ພວກເຮົາຈຳເປັນຕ້ອງຄົ້ນຫາຈຸດສົມດຸນລະຫວ່າງຄວາມຈຳເປັນກັບຄວາມຕ້ອງການ ລວມທັງຄວາມສົມດຸນລະຫວ່າງວິຖີຊີວິດສະໄໝໃໝ່ກັບການປົກປັກຮັກສາສິ່ງແວດລ້ອມ”.

ປຶ້ມ “Where the Forests Have No Words” ເຫຼັ້ມນີ້ບໍ່ໄດ້ຖືກສ້າງຂຶ້ນເພື່ອເປັນພຽງຜົນງານຮູບຖ່າຍສຳລັບຜູ້ອ່ານທົ່ວໄປເທົ່ານັ້ນ, ແຕ່ຍັງໄດ້ຮັບການອອກແບບໃຫ້ເປັນແຫຼ່ງຂໍ້ມູນເຊີງເລິກສຳລັບຜູ້ຮັກທຳມະຊາດ, ລວມທັງນັກພະຈິນໄພ, ນັກວິຊາການ ແລະ ນັກຄົ້ນຄວ້ານຳອີກ ໂດຍມີການບອກເລົ່າກ່ຽວກັບລາຍລະອຽດຂອງຄວາມອຶດທົນພະຍາຍາມ ແລະ ເຕັກນິກເບື້ອງຫຼັງການຖ່າຍພາບແຕ່ລະແຜ່ນ. ຢ່າງໃດກໍຕາມ, ເປົ້າໝາຍຂອງຕຸ່ນຊໍ້າພັດຍິ່ງໃຫຍ່ກວ່ານັ້ນອີກ ໂດຍສະເພາະກໍແມ່ນ ການສ້າງແຮງບັນດານໃຈໃຫ້ແກ່ຄົນລາວ ແລະ ນັກທ່ອງທ່ຽວທີ່ມາຢ້ຽມຢາມປະເທດລາວ ໃນການຮ່ວມແຮງຮ່ວມໃຈກັນປົກປັກຮັກສາມໍລະດົກທາງທຳມະຊາດອັນລ້ຳຄ່າຂອງຊາດ ແລະ ຫວັງວ່າຄວາມຮ່ວມມືດັ່ງກ່າວຈະນຳໄປສູ່ຄວາມມຸ່ງໝັ້ນຮ່ວມກັນໃນການປົກປ້ອງສິ່ງແວດລ້ອມໃຫ້ມີຄວາມເຂັ້ມແຂງ ແລະ ຍືນຍົງ.

ໃນເບື້ອງຕົ້ນ, ກະແສຕອບຮັບທີ່ມີຕໍ່ປຶ້ມເຫຼັ້ມນີ້ແມ່ນເປັນໄປໃນທາງບວກ ໂດຍຜູ້ອ່ານທ່ານໜຶ່ງໄດ້ກ່າວເຖິງຜົນງານເຫຼັ້ມນີ້ວ່າ “ດ້ວຍຜົນງານການຈັດພິມປຶ້ມເຫຼັ້ມທຳອິດຂອງເຂົາ, ຕຸ່ນປຽບເໝືອນຜູ້ເປີດໜ້າຕ່າງໃຫ້ພວກເຮົາສາມາດແນມເຫັນ ແລະ ມອບແວ່ນແຍງທີ່ສະທ້ອນຈິດວິນຍານຂອງດິນແດນມະຫັດສະຈັນແຫ່ງນີ້.”



1



2



3

4

ເພື່ອເປັນການຊຸກຍູ້ສົ່ງເສີມໃຫ້ມີການປົກປັກຮັກສາປ່າໄມ້ ແລະ ພື້ນທີ່ທຳມະຊາດຂອງລາວໃຫ້ຫຼາຍຍິ່ງຂຶ້ນ, ຕຸ່ນໄດ້ຮຽກຮ້ອງໃຫ້ມີການເພີ່ມງົບປະມານ ແລະ ການສະໜັບສະໜູນຈາກພາກລັດ ແລະ ສະຖາບັນຕ່າງໆ ສຳລັບໂຄງການອະນຸລັກທີ່ຂັບເຄື່ອນໂດຍຊຸມຊົນ ເຊິ່ງສາມາດສ້າງອາຊີບ ແລະ ລາຍຮັບຈາກການເຮັດວຽກດ້ານການອະນຸລັກໃຫ້ແກ່ປະຊາຊົນທ້ອງຖິ່ນ ພ້ອມທັງເປີດໂອກາດໃຫ້ແກ່ໄວໜຸ່ມລາວຈາກເຂດຫ່າງໄກສອກຫຼີກສາມາດເຂົ້າເຖິງການຝຶກອົບຮົມ ແລະ ການຢັ້ງຢືນດ້ານສື່ສານມວນຊົນເພື່ອການອະນຸລັກໄດ້ງ່າຍຂຶ້ນ, ລວມທັງເສີມສ້າງຄວາມເຂັ້ມແຂງດ້ານກົດໝາຍ ເພື່ອປົກປ້ອງເຂດປ່າສະຫງວນໃຫ້ເຂັ້ມງວດຂຶ້ນ, ເນື່ອງຈາກຖ້າປັດສາຈາກສິ່ງເຫຼົ່ານີ້ແລ້ວ ປຶ້ມຕ່າງໆ ເຊັ່ນຜົນງານຂອງເຂົາຄົງບໍ່ມີໂອກາດໄດ້ຮັບການຈັດພິມຂຶ້ນມາ. ທ່ານກ່າວຍຸກສະໄໝແຫ່ງການປ່ຽນແປງຢ່າງວ່ອງໄວ, ຕຸ່ນຫວັງວ່າຜົນງານຂອງຕົນ ລວມທັງຮ່ອງຮອຍທີ່ປະຖິ້ມໄວ້ຢູ່ເບື້ອງຫຼັງ ຈະສາມາດສ້າງແຮງບັນດານໃຈໃຫ້ແກ່ຜູ້ຄົນອີກຫຼາຍຫຼາຍ ໃຫ້ຫັນມາຮ່ວມມືກັນປົກປ້ອງສິ່ງທີ່ຍັງຫຼົງເຫຼືອຢູ່.

1: ຕຸ່ນຢູ່ Natures Sanctuary
2: ນົກເຄົ້ານ້ອຍ Asian Barred Owlet, Natures Sanctuary
3: ນົກຍ່າງ Openbill, Natures Sanctuary
4: ແມວດາວ Leopard Cat, ສັນພຸຫຼວງ

ຫາກທ່ານສົນໃຈສັ່ງຊື້ປຶ້ມເຫຼັ້ມນີ້, ສາມາດຕິດຕໍ່ຫາເຈົ້າຂອງຜົນງານໂດຍກົງໄດ້ທີ່ອີເມວ: souksamlan@lanjanholdings.com